**ມິຊຊາສົມໂພດປາສກາ**

**ວັນທີ 9 ເມສາ 2023**



**ພຣະວໍລະສານໂດຍນັກບຸນຢວງ 20, 1-9**

ແຕ່ເຊົ້າໆ, ມື້ຕົ້ນອາທິດ, ເວລາຍັງມືດຢູ່, ນາງມາຣີອາມັກດາເລນາໄປຄູຫາ ແລະເຫັນແຜ່ນຫີນຖືກຍົກອອກຈາກຄູຫາ. ນາງຈຶ່ງແລ່ນຫລົບເມືອຫາເປໂຕແລະສາວົກຜູ້ໜຶ່ງທີ່ພຣະເຢຊູເຈົ້າຊົງຮັກແພງບອກກັບເຂົາວ່າ: « ມີຄົນເອົາສົບພຣະອາຈານໄປແລ້ວ ບໍ່ຮູ້ວ່າເອົາໄປໄວ້ໃສ ».

ເປໂຕແລະສາວົກອີກຜູ້ໜຶ່ງຈຶ່ງອອກໄປເບິ່ງທີ່ຄູຫາ, ທັງສອງແລ່ນໄປແຕ່ສາວົກຜູ້ໜຶ່ງນັ້ນແລ່ນໄວກວ່າເປໂຕຈຶ່ງໄປຮອດຄູຫາກ່ອນ. ເຂົາກົ້ມລົງສ່ອງເບິ່ງເຫັນຜ້າຫໍ່ສົບວາງຢູ່ກັບດິນ, ແຕ່ບໍ່ໄດ້ເຂົ້າໄປທາງໃນ. ຊີມອນເປໂຕຜູ້ແລ່ນນຳຫລັງກໍມາຮອດ. ເພິ່ນເຂົ້າໄປໃນຄູຫາ ກໍເຫັນຜ້າຫໍ່ສົບວາງຢູ່ກັບດິນພ້ອມທັງຜ້າປົກໜ້າດ້ວຍ. ຜ້ານີ້ບໍ່ໄດ້ປົນກັບຜ້າຫໍ່ສົບ ແຕ່ພັບໄວ້ຢູ່ບ່ອນຕ່າງຫາກ. ແລ້ວສາວົກຜູ້ມາຮອດກ່ອນນັ້ນກໍເຂົ້າໃນຄູຫາ. ເພິ່ນໄດ້ເຫັນແລະເຊື່ອ. ຍ້ອນເຂົາຍັງບໍ່ທັນເຂົ້າໃຈພຣະຄຳພີທີ່ກ່າວວ່າ: « ພຣະອົງຈະຕ້ອງກັບເປັນຄືນມາຈາກພວກຜູ້ຕາຍ ».

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ຢງ 20, 1-9**

ແຕ່ເຊົ້າໆຂອງວັນຕົ້ນອາທິດເວລາຍັງມືດຢູ່ ແທນທີ່ຈະແມ່ນເປໂຕຜູ້ເປັນອ້າຍກົກໃນກຸ່ມພວກລູກສິດຂອງພຣະເຢຊູເຈົ້າແລ່ນໄປທີ່ຄູຫາພຣະອາຈານຂອງຕົນ ຫລືອາດຈະເປັນຢວງລູກສິດຜູ້ພຣະເຢຊູເຈົ້າຮັກແພງທີ່ຈະໄປຄູຫາເພື່ອຮ້ອງໄຫ້ອາໄລອາວອນພຣະອາຈານຂອງຕົນ, ພັດແມ່ນຍິງສາວຄົນບາບຜູ້ໜຶ່ງຊື່ມາຣີອາມັກດາເລນາທີ່ຮອດຄູຫາກ່ອນໝູ່. ມາຣີອາມັກດາເລນານີ້ແມ່ນໃຜ? ແມ່ນຜູ້ທີ່ພຣະເຢຊູເຈົ້າໄດ້ໄລ່ຜີເຈັດໂຕອອກຈາກນາງ, ແມ່ນຜູ້ທີ່ພຣະເຢຊູເຈົ້າໄດ້ຍົກໂທດໂພດຜິດທັງໝົດໃຫ້ເມື່ອນາງຮ້ອງໄຫ້ຢູ່ໃກ້ພຣະບາດຂອງພຣະອົງແລະໄດ້ເອົາຜົມຂອງຕົນເຊັດພຣະບາດ. ແລະຢູ່ຕີນກາງເຂນເມື່ອພວກລູກສິດຄົນອື່ນປະຖິ້ມພຣະເຢຊູເຈົ້າ, ນາງມາຣີອາຜູ້ເປັນມານດາພຣະອົງ, ນັກບຸນຢວງລູກສິດຜູ້ພຣະອົງຮັກແພງແລະນາງມາຣີອາມັກດາເລນາກໍຢູ່ທີ່ນັ້ນດ້ວຍ.

ວັນນີ້ເມື່ອພວກລູກສິດຂອງພຣະເຢຊູເຈົ້າກຳລັງຫລົບລີ້ຍ້ອນຢ້ານພວກຢິວ. ນາງມາຣີອາມັກດາເລນາກໍໄດ້ໄປທີ່ຄູຫາແຕ່ເຊົ້າໆເພື່ອຮ້ອງໄຫ້ອາໄລອາວອນພຣະອາຈານຂອງຕົນ. ຄຳຖາມທີ່ຕາມມາຄື ເປັນຫຍັງນາງມາຣີອາມັກດາເລນາຈຶ່ງຮັກແພງພຣະເຢຊູເຈົ້າຫລາຍກວ່າລູກສິດຄົນອື່ນ? ເປັນຫຍັງນາງມາຣີອາມັກດາເລນາຈຶ່ງບໍ່ຢ້ານພວກຢິວຈະຈັບແລະທຳຮ້າຍນາງ? ຄຳຕອບກໍຄືຍ້ອນນາງໄດ້ຮັບການອະໄພໂທດຈາກພຣະເຢຊູເຈົ້າຫລາຍ ເພາະສະນັ້ນ, ນາງຈຶ່ງຮັກແພງພຣະເຢຊູເຈົ້າຫລາຍກວ່າຄົນອື່ນ. (ລກ 7, 47). ຄວາມຮັກທຳໃຫ້ນາງບໍ່ຢ້ານກົວຕໍ່ໄພອັນຕະລາຍໃດໆ, ຄວາມຮັກທຳໃຫ້ນາງຈື່ສຽງຂອງພຣະເຢຊູເຈົ້າໄດ້ເມື່ອພຣະອົງເອີ້ນນາງທີ່ປາກຄູຫາ ແລະນາງກໍໄດ້ຕອບສຽງຮຽກເອີ້ນນັ້ນໂດຍກ່າວວ່າ: "ຣາບບູນີ" ອັນມີຄວາມໝາຍ: "ພຣະອາຈານ" (ຢງ 20, 16). ແລະຍ້ອນຄວາມຮັກຈຶ່ງທຳໃຫ້ນາງໄດ້ພົບພຣະເຢຊູເຈົ້າກັບເປັນຄືນມາຈາກຄວາມຕາຍ. ແລະຍັງແມ່ນຍ້ອນຄວາມຮັກນາງຈຶ່ງໄດ້ກາຍເປັນສາວົກຄົນທຳອິດຂອງພຣະເຢຊູເຈົ້າທີ່ໄດ້ນຳຂ່າວດີແຫ່ງການກັບເປັນຄືນມາຂອງພຣະອົງໄປໃຫ້ສາວົກຄົນອື່ນຮູ້ (ຢງ 20, 17).

ໃນວັນທີ່ພຣະເຢຊູເຈົ້າກັບເປັນຄືນມາຈາກຄວາມຕາຍ, ນາງມາຣີອາມັກດາເລນາຊ່ວຍພວກເຮົາໃຫ້ເບິ່ງຄືນຊີວິດຄວາມຜູກພັນລະຫວ່າງພວກເຮົາກັບພຣະເຢຊູເຈົ້າ. ພວກເຮົາໄດ້ສຳພັດເຖິງຄວາມຮັກທີ່ພຣະອົງມີຕໍ່ພວກເຮົາບໍ? ການຕາຍຂອງພຣະອົງແມ່ນເພື່ອລຶບລ້າງບາບໂທດຂອງພວກເຮົາ. ແລະການກັບເປັນຄືນມາຂອງພຣະອົງແມ່ນເພື່ອໃຫ້ພວກເຮົາໄດ້ມີຊີວິດນິລັນດອນຮ່ວມກັບພຣະອົງ. ອາໄສຄວາມຮັກນີ້ພວກເຮົາຈຶ່ງເຊື່ອວ່າພຣະເຢຊູເຈົ້າໄດ້ກັບເປັນຄືນມາຈິງແທ້. ແລະການກັບເປັນຄືນມາຂອງພຣະອົງນີ້ແມ່ນແກ່ນສານແຫ່ງຂ່າວດີ, ຂ່າວປະເສດ ຫລືພວກເຮົາເຄີຍຮຽກວ່າ: "ພຣະວໍລະສານ"ຊຶ່ງພວກເຮົາຕ້ອງໄດ້ປະກາດໃຫ້ຄົນອື່ນຮູ້ຈັກ. ເໝືອນກັບນາງມາຣີອາມັກດາເລນາຜູ້ເປັນສາວົກທຳອິດຂອງພຣະເຢຊູເຈົ້າໄດ້ນຳເອົາຂ່າວການກັບເປັນຄືນມາຂອງພຣະອົງໃຫ້ສາວົກຄົນອື່ນຮູ້ຈັກນັ້ນແລ. ອາແມນ

ສຸກສັນວັນປາສກາ

ຄຸນພໍ່ ອັງຕວນ ກຽດຕິສັກ